**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 1011 /ຫຄຊກລ.ຄມ
ນະຄອນຫລວງວຽງຈັນ, ວັນທີ 25 ກັນຍາ 2024

## ບົດບັນທຶກກອງປະຊຸມ
## ວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ລບຕ ປະຈຳໄຕມາດ 3 ປີ 2024

### I ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ກອງປະຊຸມວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ລບຕ ປະຈຳໄຕມາດ 3 ປີ 2024 ທີ່ຫ້ອງປະຊຸມ ຂອງໂຮງແຮມລາວເທວ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ດວງສີ ທຳມະວົງ, ຮອງຫົວໜ້າ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ແລະ ມີຜູ້ເຂົ້າຮ່ວມຄື: ຊ່ຽວຊານຕາງໜ້າຈາກອົງການສະຫະປະຊາຊາດ ເພື່ອການພັດທະນາ, ຫົວໜ້າໜ່ວຍງານໂຄສະນາ ສຶກສາຄວາມສ່ຽງໄພ, ວິຊາການຈາກບັນດາໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ຫ້ອງການ ຄຊກລ ພ້ອມດ້ວຍວິຊາການ ແລະ ຊ່ຽວຊານ ຈາກ 06 ອົງການມະນຸດສະທຳ (ໂຄງການເກັບກູ້ລະເບີດແຫ່ງຊາດ, ກອງກວດກູ້ເພື່ອມະນຸດສະທຳກອງທັບ 58, ອົງການເອັນພີເອ, ອົງການຮາໂລທຣັສ, ອົງການແມັກປະຈຳ ສປປ ລາວ ແລະ ອົງການສຶກສາໂລກ), ກົມຂະບວນການ ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ), ບໍລິສັດມິນເຊີດ, ບໍລິສັດເກຣດ, ບໍລິສັດອອສລາວ ແລະ ບໍລິສັດສີສັນ ເກັບກູ້ລະເບີດ. ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 27 ທ່ານ ເປັນເພດຍິງ 13 ທ່ານ (49 ສ່ວນຮ້ອຍ ຂອງຜູ້ເຂົ້າຮ່ວມທັງໝົດ).

### II ຈຸດປະສົງ

1. ລາຍງານກ່ຽວກັບກິດຈະກຳການຄຸ້ມຄອງຂໍ້ມູນຂ່າວສານ ແລະ ສະຖິຕິການປະຕິບັດງານຂອງຂະແໜງການ;
2. ນຳສະເໜີ ກ່ຽວກັບບົດລາຍງານຄວາມຄືບໜ້າປະຈຳເດືອນ ໃນ ArcGIS online;
3. ແຜນທີ່ການປະຕິບັດງານ ໃນ ArcGIS online ເພື່ອສະໜັບສະໜູນ ໃຫ້ການຈັດບູລິມະສິດ;
4. ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ສ້າງຄວາມອາດສາມາດ ໃນການຄຸ້ມຄອງຖານຂໍ້ມູນ ທີ່ຈັດຕັ້ງປະຕິບັດຮ່ວມກັບອົງການ ເອັນພີເອ;
5. ຄວາມຄືບໜ້າຂອງການແກ້ໄຂຂໍ້ມູນທີ່ບໍ່ສົມບູນໃນຖານຂໍ້ມູນ;
6. ການພັດທະນາຍຸດທະສາດ ການຄຸ້ມຄອງຂໍ້ມູນຂ່າວສານ ໃນຂະແໜງການ ລບຕ 2025 ຫາ 2030.

### III ເນື້ອໃນກອງປະຊຸມ

- ສະຫຼຸບ ການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ແລະ ສະຖິຕິການປະຕິບັດງານ ໃນຂະແໜງການ ລບຕ ສະເພາະປີ 2024;
- ຮັບຟັງ ສະຫຼຸບການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານປະຈຳໄຕມາດ 3 ປີ 2024 ແລະ ແຜນການປະຕິບັດງານ ໄຕມາດ 4 ປີ 2024 ຂອງໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ;

ບ້ານ ໜອງບອນ, ເມືອງ ໄຊເສດຖາ ຕູ້ ປນ: 7261, ນະຄອນຫຼວງວຽງຈັນ, ໂທລະສັບ: 021 262419, 262386, ແຟັກ: 856 21 262396; ອີເມວ:
UXO.nra@gmail.com www.nra.gov.la

- ນຳສະເໜີກ່ຽວກັບບົດລາຍງານຄວາມຄືບໜ້າປະຈຳເດືອນ Monthly progress report ໃນ ArcGIS online;
- ນຳສະເໜີ ກ່ຽວກັບການເກັບກຳຂໍ້ມູນຜົນສຳເລັດ ທີ່ອອກແບບຢູ່ໂປຣແກັມ Survey 123;
- ນຳສະເໜີແຜນທີ່ການປະຕິບັດງານ ລບຕ ໃນ ArcGIS online ເພື່ອສະໜັບສະໜູນໃຫ້ການຈັດລຽງບູລິມະສິດ;
- ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ສ້າງຄວາມອາດສາມາດ ໃນການຄຸ້ມຄອງຂໍ້ມູນຂ່າວສານທີ່ຈັດຕັ້ງປະຕິບັດຮ່ວມກັບອົງການ ເອັນພີເອ;
- ການພັດທະນາຍຸດທະສາດກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ໃນຂະແໜງການ ລບຕ 2025 ຫາ 2030;
- ເພື່ອລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດກິດຈະກຳການເຊື່ອມສານບົດບາດຍິງ - ຊາຍ ໃນຂະແໜງການ ລບຕ.

**IV. ຂໍ້ສະເໜີ ແລະ ຂໍ້ຕົກລົງ ພາຍໃນກອງປະຊຸມ**

1. ສະເໜີໃຫ້ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ປະສານກັບອົງການແມັກ ເລື່ອງການລາຍງານການແກ້ໄຂຂໍ້ມູນທີ່ບໍ່ສົມບູນ ແລະ ໃຫ້ໜ່ວຍງານ ປະສານກັບຊ່ຽວຊານໃນການຈັດກອງປະຊຸມ ເພື່ອແກ້ໄຂຂໍ້ມູນທີ່ບໍ່ສົມບູນ;
2. ການທົບທວນການຈັດຕັ້ງປະຕິບັດກິດຈະກຳໄຕມາດ 3 ຍັງສັງເກດເຫັນການລາຍງານຂອງບໍລິສັດທີ່ເປັນບັນຫາ ທີ່ຍັງຕ້ອງການແກ້ໄຂ. ໃຫ້ສືບຕໍ່ແກ້ໄຂ ເຊັ່ນ ການລາຍງານຂອງບໍລິສັດ ສັງເກດເຫັນວ່າບໍ່ມີການລາຍງານ. ເຮົາຈະຊຸກຍູ້ແນວໃດໃຫ້ເຂົາເຈົ້າສາມາດລາຍງານໄດ້, ສະເໜີໃຫ້ມີການສະໜັບສະໜູນບໍລິສັດໃນການຝຶກອົບຮົມ ອາດຈະນຳໃຊ້ງົບຂອງໂຄງການສ້າງຄວາມອາດສາມາດ IM CD. ໃຫ້ກວດກາເບິ່ງຕື່ມໃນໄລຍະປີນີ້ ສາມາດຝຶກອົບຮົມໃຫ້ຂະເຈົ້າໃນໄລຍະໃດ ແລະ ສະເໜີໃຫ້ເອົາໃສ່ໃນແຜນໄຕມາດ 4 ປີ 2024;
3. ໃຫ້ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ສະຫຼຸບການຝຶກອົບຮົມ, ພາກສ່ວນໃດທີ່ເຂົ້າຮ່ວມຈາກແຂວງ ແລະ ເມືອງ. ຍິງຈັກຄົນ ຊາຍຈັກຄົນ ລະອຽດຕື່ມ. ສະເພາະແຂວງສະຫວັນນະເຂດ ແມ່ນສິ່ງໃຫ້ອົງການປະຕິບັດງານ ຮາໂລທັສ ເພື່ອການປະສານງານຮ່ວມມືທີ່ດີໃນທ້ອງຖິ່ນ;
4. ສະເໜີໃຫ້ບັນດາບໍລິສັດ ທີ່ບໍ່ໄດ້ລາຍງານການປະຕິບັດງານ ເຂົ້າຖານຂໍ້ມູນແຫ່ງຊາດ.
5. ເລື່ອງບົດລາຍງານໄຕມາດ 3 ແລະ ແຜນຂອງໄຕມາດ 4 ເຫັນວ່າຂ້ອນຂ້າງຄົບຖ້ວນ. ພາຍໃນໄຕມາດໜ້າໃຫ້ໜ່ວຍງານສະເໜີຕື່ມ ສຳລັບຂໍ້ສະດວກ ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້;
6. ເນື້ອໃນບົດລາຍງານຜົນສຳເລັດ ແລະ ບົດລາຍງານຄວາມຄືບໜ້າປະຈຳເດືອນ. ຢາກໃຫ້ເນື້ອໃນອອກໃນເຄື່ອງມື Dashboard. ສະເໜີໃຫ້ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ເບິ່ງຕາມການຮ້ອງຂໍ ຕາມໜ່ວຍງານຮັບຜິດຊອບ ເຊັ່ນ: ຂໍ້ມູນຜູ້ເຂົ້າຮ່ວມກິດຈະກຳການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃຫ້ສາມາດແຍກເປັນເພດຍິງ, ຊາຍ, ເດັກຍິງ ແລະ ເດັກຊາຍ ແລະ ຂໍ້ມູນຂອງກິດຈະກຳລົງໂຮງຮຽນກໍເຊັ່ນດຽວກັນ;
7. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ເຫັນວ່າດຳເນີນໄປຕາມປົກກະຕິ. ໃຫ້ສຸມໃສ່ກິດຈະກຳໃດ ທີ່ບໍ່ທັນສຳເລັດ ແມ່ນໃຫ້ປຶກສາກັນຕື່ມ ເຊັ່ນ: ການສະໜອງອຸປະກອນໃຫ້ ພະແນກການຕ່າງປະເທດແຂວງ. ຖ້າຍັງຄາຢູ່ຈຸດໃດ ແມ່ນໃຫ້ຮີບຮ້ອນສະເໜີຫາຄະນະຫ້ອງການ ເພື່ອຊອກຫາທາງແກ້ໄຂ;
8. ສະເໜີໃຫ້ໜ່ວຍງານປັບປຸງ ເຄື່ອງມື UXO Operatoin Map (ArcGIS online);

9. ສະເໜີ ໃຫ້ຜູ້ປະສານງານຍ່ອຍເລື່ອງບົດບາດຍິງ - ຊາຍ ໃຫ້ກະກຽມວຽກຫຼັກທີ່ຕົນຮັບຜິດຊອບ ທີ່ມີຄວາມກ່ຽວເນື່ອງກັບການເຊື່ອມສານບົດບາດຍິງຊາຍ ແລະ ນຳສະເໜີ ໃນກອງປະຊຸມແຜນການຈັດຕັ້ງປະຕິບັດ ທີ່ຈະຈັດຂຶ້ນໃນວັນທີ 30 ກັນຍາ 2024 ນີ້.

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ. ຫຼັງຈາກນັ້ນ, ທ່ານໄດ້ກ່າວຄຳຂອບໃຈບັນດາຜູ້ແທນທີ່ເສຍສະຫຼະເວລາ ເຂົ້າຮ່ວມກອງປະຊຸມວິຊາການຄັ້ງນີ້ ພ້ອມທັງອວຍພອນໃຫ້ບັນດາຜູ້ແທນຈາກອົງການປະຕິບັດງານ ລບຕ ມີສຸຂະພາບເຂັ້ມແຂງ, ພາລະນາໄມສົມບູນ ແລະ ກ່າວປິດກອງປະຊຸມ.

ກອງປະຊຸມໄດ້ປິດລົງໃນເວລາ 12:10 ໂມງ ຂອງວັນທີ 23 ກັນຍາ 2024.

| | |
|---|---|
| **ປະທານກອງປະຊຸມ** | **ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ** |
| **ດວງສີ ທຳມະວົງ** | ມ. ເພັດສະຫວງ |